ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ອັດຕະປື, ວັນທີ 28-12-2016

# ບົດບັນທຶກ

## ກອງປະຊຸມວຽກງານປົກຄອງແຂວງ ປະຈໍາເດືອນ 12 ປີ 2016

ກອງປະຊຸມວຽກງານປົກຄອງແຂວງ ປະຈໍາເດືອນ 12 ປີ 2016 ໄດ້ດໍາເນີນໃນຕອນເຊົ້າຂອງວັນທີ 23/12/2016 ທີ່ຫ້ອງປະຊຸມສໍານັກງານປົກຄອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ນາມ ວິຍະເກດ ກໍາມະການສູນກາງພັກ, ເລຂາພັກແຂວງ-ເຈົ້າແຂວງອັດຕະປື ແລະ ມີບັນດາທ່ານຮອງເຈົ້າແຂວງ, ຫົວໜ້າ-ຮອງພະແນກການ, ຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມທັງໝົດ 40 ຄົນ, ຍິງ 6 ຄົນ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື ແລະ ປະກອບຄໍາຄິດຄໍາເຫັນເປັນເອກະພາບກັນຕໍ່ເນື້ອໃນບົດສະຫຼຸບລາຍງານການຄົ້ນຄວ້າຜັນຂະຫຍາຍ ຄໍາສັ່ງເລກທີ 34/ນຍ, ສະພາບການປັບປຸງກົງຈັກ ແລະ ການມອບໂອນບັນດາວຽກງານໃຫ້ພະແນກການທີ່ຂັ້ນເທິງຕົກລົງແລ້ວ; ການຈັດຕັ້ງປະຕິບັດຄໍາສັ່ງແນະນໍາເລກທີ 15/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້; ລາຍງານຜົນກະທົບຈາກໄພພິບັດໃນໄລຍະຜ່ານມາ ແລະ ກະກຽມວິທີແກ້ໄຂ; ລາຍງານຜົນກອງປະຊຸມລັດຖະບານເປີດກວ້າງ, ກອງປະຊຸມວຽກງານການເງິນ ປີ 2017 ແລະ ບັນດາທິດຊີ້ນໍາຂອງກອງປະຊຸມຕໍ່ບັນດາທ້ອງຖິ່ນ, ຄະນະຊຸກຍູ້ເສດຖະກິດລາຍງານບັນຫາພົ້ນເດັ່ນທີ່ພົວພັນ ແລະ ຈະຕ້ອງແກ້ໄຂ; ລາຍງານຄືນຜົນຂອງການປັບປຸງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ໂດຍສະເພາະ ບັນດາຄາດໝາຍສູ້ຊົນຕົ້ນຕໍ ແລະ ບັນດາໂຄງການບູລິມະສິດສໍາລັບ 5 ປີ ນັບທັງພາກເອກະຊົນ ແລະ ການລະດົມທຶນຈາກ (ODA); ການກວດກາ ແລະ ປະເມີນຖານລາຍຮັບ ຕາມຄໍາສັ່ງຂອງນາຍົກລັດຖະມົນຕີ; ລາຍງານຜົນຂອງກອງປະຊຸມສຸດຍອດ CLV ຄັ້ງທີ 9 ທີ່ແຂວງສຽມລຽບ ຣາຊະອານາຈັກ ກໍາປູເຈຍ.

ຜ່ານການຄົ້ນຄວ້າປຶກສາຫາລື ແລະ ການປະກອບຄວາມຄິດຄວາມເຫັນ ຢ່າງກົງໄປກົງມາ, ຈຶ່ງໄດ້ຕົກລົງເປັນເອກະພາບກັນ ເພື່ອສືບຕໍ່ແກ້ໄຂ ແລະ ຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ກ່ຽວກັບວຽກງານຂ້າງເທິງ ດັ່ງນີ້:

1. ກ່ຽວກັບການຄົ້ນຄວ້າຜັນຂະຫຍາຍ ຄໍາສັ່ງເລກທີ 34/ນຍ, ສະພາບການປັບປຸງກົງຈັກ ແລະ ການມອບໂອນບັນດາວຽກງານໃຫ້ພະແນກການທີ່ຂັ້ນເທິງຕົກລົງແລ້ວ:

- **ວຽກປັບປຸງກົງຈັກ ແລະ ການມອບໂອນ:** ມອບໃຫ້ພະແນກ ພາຍໃນແຂວງ ສືບຕໍ່ຄົ້ນຄວ້າພິຈາລະນາມອບໂອນໃຫ້ສຳເລັດ ໂດຍສະເພາະຫ້ອງການສົ່ງເສີມຄວາມກ້າວໜ້າແມ່ຍິງ ແລະ ເດັກນ້ອຍ ທີ່ຍັງຄ້າງຢູ່, ຖ້າວ່າມີຄວາມຫຍຸ້ງຍາກ ແລະ ຍັງຄາຢູ່ຈຸດໃດໜຶ່ງ ແມ່ນໃຫ້ລາຍງານຂັ້ນເທິງ ເພື່ອຂໍທິດຊີ້ນຳ ໃນການຈັດຕັ້ງປະຕິບັດ.
- **ກ່ຽວກັບການຄົ້ນຄວ້າຜັນຂະຫຍາຍ ຄຳສັ່ງເລກທີ 34/ນຍ:** ໃຫ້ພະແນກພາຍໃນແຂວງກວດກາຄືນໂຄງການໃດທີ່ແຂວງມອບໃຫ້ເມືອງເປັນຜູ້ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ທີ່ຂຶ້ນກັບຂະແໜງການຕ່າງໆ ຂອງແຂວງ, ຖ້າວ່າເມືອງບໍ່ສາມາດຈັດຕັ້ງປະຕິບັດໄດ້ ແຂວງຕ້ອງໄດ້ຊ່ອຍໜູນດ້ານວິຊາການຂອງຕົນລົງສົມທົບເພີ່ມ.

2. **ການຈັດຕັ້ງປະຕິບັດຄຳສັ່ງແນະນຳເລກທີ 15/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້:**

- ເຫັນດີຫຍຸບຄະນະຄຸ້ມຄອງການຂຸດຄົ້ນໄມ້ ເຂື່ອນນໍ້າກົງ ແລະ ເຊກະໝານ 1.

3. **ການລາຍງານວຽກ ຜົນການເຂົ້າຮ່ວມກອງປະຊຸມລັດຖະບານເປີດກວ້າງ ຄັ້ງວັນທີ 13-14 ທັນວາ 2016 ແລະ ວຽກງານຊຸກຍູ້ເສດຖະກິດ:**

- **ກ່ຽວກັບເງິນເດືອນ ໃນສົກປີ 2017 ຂອງພະນັກງານ-ລັດຖະກອນ ໃນດັດສະນີໃໝ່:** ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຕ້ອງຄວບຄຸມບັນຫາດ້ານລາຄາສິນຄ້າຕ່າງໆ ໃຫ້ຢູ່ໃນສພາບປົກກະຕິ.
- **ວຽກງານຊຸກຍູ້ເສດຖະກິດ:** ມອບໃຫ້ຄະນະຊຸກຍູ້ເສດຖະກິດ ສືບຕໍ່ສົ່ງເສີມ ພາກສ່ວນທີ່ຈະສ້າງລາຍຮັບ, ແຫຼ່ງທີ່ເປັນຖານລາຍຮັບທີ່ມີຢູ່ໃນປະຈຸບັນ ໃຫ້ຈະແຈ້ງ; ວຽກໃດຫາກມີການຊົດເຊີຍແລ້ວ ຍົກຕົວຢ່າງຄື: ດິນຂອງບໍລິສັດ ຮ່ວາງແອັງ ຫາກມີການຊົດເຊີຍສຳເລັດ ຕ້ອງມອບດິນໃຫ້ບໍລິສັດ ເພື່ອແກ້ໄຂບັນຫາບໍ່ໃຫ້ຄ້າງ.

4. **ລາຍງານຄືນຜົນຂອງການປັບປຸງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ແລະ ປະເມີນຖານລາຍຮັບ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ:**

- ຕໍ່ກັບຄາດໝາຍສູ້ຊົນມະຫາພາກ ໂດຍສະເພາະ (GDP) ຍັງບໍ່ທັນປັບປຸງເທື່ອ, ລໍໄປເບິ່ງອີກປະມານ 6 ເດືອນ ຫຼື 1 ປີ; ເນື່ອງຈາກການພັດທະນາເສດຖະກິດທີ່ບໍ່ມີໄມ້ເປັນຖານລາຍຮັບແລ້ວ (ໄມ້, ຜະລິດຕະພັນໄມ້) ພວກເຮົາຕ້ອງເປີດກວ້າງການພັດທະນາພາກທຸລະກິດ ການບໍລິການທີ່ໂປ່ງໃສ, ມີຖານການຊຸກຍູ້ເສດຖະກິດຊັດເຈນ, ຊອກຫາທ່າແຮງບຸກທະລຸເພື່ອຍາດແຍ່ງການລົງທຶນ ແລະ ເກັບລາຍຮັບທີ່ບົ່ມຊ້ອນໃຫ້ໄດ້.

5. ມອບໃຫ້ຫ້ອງວ່າການແຂວງ: ແຈ້ງການໄປຍັງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເຮັດໃບສະເໜີ ເພື່ອຢັ້ງຢືນຈາກແຂວງ ຫາ ສູນກາງ ເພື່ອຂໍລົດເກັບຂີ້ເຫຍື້ອ, ຊຶ່ງປະຈຸບັນທາງສູນກາງມີລົດໄວ້ຮອງຮັບແລ້ວ ຈຳນວນ 1 ຄັນ.

6. ສຳລັບວຽກຈຸດສຸມໃນເດືອນ 1/2017 ຕ້ອງສຸມໃສ່ດັ່ງນີ້:

- ກຳແໜ້ນສະພາບຢູ່ພາຍໃນ ແລະ ສາກົນ, ປະຈຸບັນມີຄວາມສັບສົນຍາກທີ່ຈະຄາດຄະເນໄດ້, ຕ້ອງໄດ້ລະມັດລະວັງ ແລະ ຕິດຕາມຢ່າງຈິດຈໍ່; ເອົາໃຈໃສ່ຕິດຕາມສະພາບເສດຖະກິດ ທີ່ຍັງຝືດເຄືອງ ຊຶ່ງເປັນທັງສິ່ງທ້າທາຍ ແລະ ກາລະໂອກາດ, ໝາຍວ່າຫັນໃຫ້ເປັນໂອກາດ.
- ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ ພະນັກງານ-ລັດຖະກອນ, ຕັດສິນໃຈເຮັດໃຫ້ດີກວ່າເກົ່າສ້າງບາດ

ກ້າວບຸກທະລຸ, ການສຶກສາອົບຮົມຕ້ອງຕິດພັນກັບພຶດຕິກຳ.

- ຕັດສິນໃຈພັດທະນາຕົນເອງຕາມທິດ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ເປັນເຈົ້າການໃນທຸກວຽກງານ. ດັ່ງສະແດງອອກໃນຂະບວນການອະນາໄມຕົວເມືອງຂອງເມືອງສາມັກຄີໄຊ.
- ສືບຕໍ່ແກ້ໄຂບັນດາບໍລິການພາກລັດ, ບໍ່ສ້າງຄວາມສັບສົນ, ໂປ່ງໃສ ແລະ ສະດວກວ່ອງໄວ ໂດຍສະເພາະແມ່ນພາກທຸລະກິດ ເພື່ອດຶງດູດການລົງທຶນ.
- ສືບຕໍ່ການສົ່ງເສີມການຜະລິດຂອງປະຊາຊົນ.
- ສືບຕໍ່ຂຸດຄົ້ນທຸກແຫຼ່ງລາຍຮັບທີ່ບົ່ມຊ້ອນໂດຍເລີ່ມຈາກອັນງ່າຍກ່ອນໄປຫາອັນຍາກ.
- ເອົາໃຈໃສ່ສະກັດກັ້ນການລັກລອບຂຸດຄົ້ນໃນບໍ່ຫີນແຫ່ງໃໝ່ ທັງເກັບກຳຂໍ້ມູນ ເພື່ອລາຍງານຂັ້ນເທິງ.
- ສຳລັບວຽກ CLV ມອບໃຫ້ແຕ່ລະພະແນການ, ຂະແໜງການປະຕິບັດຕາມການຕົກລົງໃນກອງປະຊຸມຕາມພາລະບົດບາດຂອງໃຜມັນ.

ກອງປະຊຸມວິຊາການລັດຂັ້ນແຂວງປະຈຳເດືອນ ທັນວາ ປີ 2016 ໄດ້ດຳເນີນມາຮອດເວລາ 16:00 ໂມງ ຂອງວັນທີ 23 ທັນວາ 2016 ກອງປະຊຸມກໍ່ໄດ້ປິດລົງຢ່າງເປັນທາງການ ດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

| ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ |
|---|---|
| ດຣ.ນາມ ວິຍະເກດ | ທະນູໄຊ ບັນຊາລິດ |